ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
************************

ສຳນັກງານນາຍົກລັດຖະມົນຕີ ເລກທີ 03/ນຍ

ນະຄອນຫຼວງວຽງຈັນ, ວັນທີ 9 ມັງກອນ 2004

# ດຳລັດ

ວ່າດ້ວຍການປະມູນຈັດຊື້ ສິນຄ້າ, ການກໍ່ສ້າງ,
ການສ້ອມແປງ ແລະການບໍລິການດ້ວຍທຶນຂອງລັດ.
(ສະບັບປັບປຸງ)

-------------------------

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະບັບປັບປຸງປີ 2003.
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 127/ນຍ, ລົງວັນທີ 3 ຕຸລາ 2000.
- ອີງຕາມການສະເໜີຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 2190/ກງ, ລົງວັນທີ 10 ທັນວາ 2003.

## ນາຍົກລັດຖະມົນຕີອອກດຳລັດ

### ໝວດທີ 1
### ບົດບັນຍັດທົ່ວໄປ

<u>ມາດຕາ 01:</u> ຈຸດປະສົງ.

ດຳລັດສະບັບນີ້ ມີຈຸດປະສົງເພື່ອກຳນົດລະບຽບການ, ຣູບການ ແລະຂັ້ນຕອນຕ່າງໆໃນການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະການບໍລິການດ້ວຍທຶນຂອງລັດ. ແນໃສ່ຮັບປະກັນໃຫ້ການປະມູນຈັດຊື້ມີປະສິດທິຜົນ, ມີຄວາມໂປ່ງໃສ ແລະປະຢັດທຶນຂອງລັດ.

ເປີດກ້ວາງ ແລະສົ່ງເສີມໃຫ້ທຸກໆພາກສ່ວນເສດຖະກິດມີສິດສະເໜີພາບ ແລະເທົ່າທຽມກັນ ເພື່ອເຂົ້າຮ່ວມປະມູນແຂ່ງຂັນໃນການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະການບໍລິການ ໃຫ້ແກ່ອົງການຈັດຕັ້ງຂອງລັດ ແລະວິສາຫະກິດຂອງລັດ.

<u>ມາດຕາ 02:</u> ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້.

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້:

1. <u>ການປະມູນ:</u> ໝາຍເຖິງ ການແຂ່ງຂັນທາງດ້ານລາຄາ ແລະຄຸນນະພາບໃນການສະໜອງສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະການບໍລິການດ້ວຍຫລາຍຮູບການ ແລະຂັ້ນຕອນທີ່ກຳນົດໄວ້.
2. <u>ການປະມູນແບບສອງຂັ້ນຕອນ:</u> ໝາຍເຖິງ ການດຳເນີນປະມູນດ້ວຍສອງຂັ້ນຕອນທີ່ແຕກຕ່າງກັນ ຄື: ໃນຂັ້ນຕອນທີໜຶ່ງ ສະເໜີໃຫ້ຜູ້ທີ່ສົນໃຈໃນການປະມູນຍື່ນຂໍ້ສະເໜີດ້ານເຕັກນິກ ແລະວິທີການປະຕິບັດກ່ອນ, ເພື່ອປະເມີນ ແລະຮັບຮອງເອົາມາດຕະຖານເຕັກນິກທີ່ເໝາະສົມກ່ອນ; ຂັ້ນຕອນທີສອງ ແມ່ນດຳເນີນການປະມູນແຂ່ງຂັນດ້ານລາຄາ.
3. <u>ສິນຄ້າ:</u> ໝາຍເຖິງ ວັດຖຸສິ່ງໃດສິ່ງໜຶ່ງເປັນທາດແຂງ, ແຫລວຫລືເປັນອາຍທີ່ມີມູນຄ່າທາງດ້ານເສດຖະກິດ, ຊຶ່ງສາມາດແລກປ່ຽນ ແລະຊື້ຂາຍໄດ້ເຊັ່ນ: ອຸປະກອນ, ເຄື່ອງປະກອບ, ເຄື່ອງຈັກ, ຍານພາຫະນະ ແລະຜະລິດຕະພັນ ອື່ນໆ.
4. <u>ການກໍ່ສ້າງ-ສ້ອມແປງ:</u> ຫມາຍເຖິງ ການດຳເນີນກິດຈະການໂຄງການກໍ່ສ້າງ-ສ້ອມແປງທາງ, ຊົນລະປະທານ, ເຂື່ອນໄຟຟ້ານ້ຳຕົກ, ໂຮງຈັກ, ໂຮງງານ, ເຄຫະສະຖານ, ອາຄານສິ່ງປຸກສ້າງ ແລະການ ກໍ່ສ້າງກິດຈະການອື່ນໆ.
5. <u>ການບໍລິການ:</u> ຫມາຍເຖິງ ການບໍລິການທາງດ້ານວິຊາການຂອງບໍລິສັດທີ່ປຶກສາ ຫລືຊ່ຽວຊານ ເປັນບຸກຄົນໃນວຽກງານສຶກສາຄົ້ນຄວ້າ, ສຳຫຼວດອອກແບບ, ຄວບຄຸມກວດກາກິດຈະການຕ່າງໆ ແລະການບໍລິການອື່ນໆ.

6. ຜູ້ຈັດຊື້ ຫລື ເຈົ້າຂອງໂຄງການ: ຫມາຍເຖິງ ອົງການຈັດຕັ້ງຂອງລັດ ແລະວິສາຫະກິດຂອງລັດທີ່ນໍາໃຊ້ທຶນຂອງລັດ.

7. ອົງການຈັດຕັ້ງປະຕິບັດໂຄງການ: ຫມາຍເຖິງ ກະຊວງ ຫລືອົງການທຽບເທົ່າ, ແຂວງ ແລະທ້ອງຖິ່ນ ທີ່ຮັບຜິດຊອບ ແລະຕິດຕາມການປະຕິບັດສັນຍາ.

8. ອົງການຈັດຕັ້ງຂອງລັດ: ຫມາຍເຖິງ ທຸກໆຂະແຫນງການຂອງລັດຖະບານແຫ່ງ ສປປ ລາວ ຢູ່ຂັ້ນສູນກາງ ແລະທ້ອງຖິ່ນ, ລວມທັງອົງການຈັດຕັ້ງ ທີ່ຕາງຫນ້າລັດຖະບານແຫ່ງ ສປປ ລາວ ຢູ່ຕ່າງປະເທດ, ຊຶ່ງນໍາໃຊ້ງົບປະມານຂອງລັດ.

9. ວິສາຫະກິດຂອງລັດ : ຫມາຍເຖິງ ຫົວຫນ່ວຍທຸລະກິດ, ຊຶ່ງລັດສ້າງຕັ້ງຂຶ້ນ ແລະຄຸ້ມຄອງ ຫລືລັດຮຸ້ນສ່ວນກັບຫົວຫນ່ວຍທຸລະກິດອື່ນໆ, ຊຶ່ງໃນນັ້ນລັດຖືຮຸ້ນຢ່າງ ຫນ້ອຍ 51%.

10. ຜູ້ໃຫ້ທຶນ: ຫມາຍເຖິງ ປະເທດໃດຫນຶ່ງ ຫລືສະຖາບັນການເງິນສາກົນ ທີ່ໃຫ້ເງິນກູ້ຢືມ ແລະ/ຫລືການຊ່ວຍເຫລືອລ້າທາງດ້ານເຕັກນິກ ຫລືດ້ານການເງິນ ເພື່ອຊຸກຍູ້ການພັດທະນາ ທາງດ້ານເສດຖະກິດ, ສັງຄົມ ແລະສິ່ງແວດລ້ອມ.

11. ຜູ້ເຂົ້າແຂ່ງຂັນປະມູນ: ຫມາຍເຖິງ ນິຕິບຸກຄົນ, ບໍລິສັດ, ວິສາຫະກິດ, ບໍລິສັດຮ່ວມ ຫລືບໍລິສັດ ສາກົນທີ່ມີຄຸນນະວຸດທີ່ເຫມາະສົມກັບເງື່ອນໄຂການຄັດເລືອກ ແລະເຂົ້າຮ່ວມປະມູນແຂ່ງຂັນຕາມຮູບການໃດຫນຶ່ງ ທີ່ຜູ້ຈັດຊື້ ຫລືເຈົ້າຂອງໂຄງການເປັນຜູ້ກໍານົດ.

12. ຜູ້ຮັບເຫມົາ ຫລືຜູ້ສະຫນອງ: ຫມາຍເຖິງ ບຸກຄົນຫລືບໍລິສັດທີ່ໄດ້ເຊັນສັນຍາກັບຜູ້ຈັດຊື້ ຫລືເຈົ້າຂອງໂຄງການ ໃນການສະຫນອງສິນຄ້າ ຫລືຮັບເຫມົາການກໍ່ສ້າງສ້ອມແປງ ແລະການບໍລິການ.

13. ຄະນະກໍາມະການປະມູນ: ຫມາຍເຖິງ ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງເປັນທາງການຈາກອົງການ ຈັດຕັ້ງທີ່ກ່ຽວຂ້ອງໃຫ້ຮັບຜິດຊອບ ແລະດໍາເນີນການປະມູນໂດຍເລີ້ມແຕ່ຂັ້ນຕອນກະກຽມການປະມູນ ຈົນຮອດການປະກາດຜູ້ຊະນະການປະມູນ.

14. ທຶນຂອງລັດ: ຫມາຍເຖິງ ທຶນພາຍໃນ ແລະທຶນທີ່ລັດໄດ້ມາຈາກການຊ່ວຍເຫລືອລ້າ ແລະການກູ້ ຢືມຈາກຕ່າງປະເທດ ແລະສະຖາບັນການເງິນຕ່າງໆ.

15. ການປະເມີນດ້ານຄຸນວຸດທິຂອງຜູ້ເຂົ້າແຂ່ງຂັນປະມູນ: ຫມາຍເຖິງ ການກວດກາຄວາມສາມາດ, ປະສົບການ ແລະຖານະການເງິນຂອງຜູ້ເຂົ້າແຂ່ງຂັນປະມູນ.

16. <u>ຄວາມລັບຂອງຊາດ</u> : ຫມາຍເຖິງ ສິ່ງທີ່ເປັນຄວາມສ່ຽງທີ່ກະທົບຕໍ່ຄວາມໝັ້ນຄົງ, ຄວາມປອດໄພ ແລະຄວາມສະຫງົບຂອງຊາດ ເຊັ່ນ: ອາວຸດ, ພາຫະນະ ແລະ ອຸປະກອນສົງຄາມ, ສິ່ງປຸກສ້າງທີ່ຮັບໃຊ້ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບໂດຍກົງ.

<u>ມາດຕາ 03:</u> ຂອບເຂດນຳໃຊ້.

ດຳລັດສະບັບນີ້ ມີຜົນນຳໃຊ້ຕໍ່ເປົ້າໝາຍດັ່ງລຸ່ມນີ້:

- ທຸກໆຂະແໜງການຂອງລັດຢູ່ຂັ້ນສູນກາງ, ແຂວງ ແລະທ້ອງຖິ່ນລວມທັງ ອົງການຈັດຕັ້ງທີ່ຕາງໜ້າລັດຖະບານແຫ່ງ ສປປ ລາວ ຢູ່ຕ່າງປະເທດ ທີ່ນຳໃຊ້ງົບປະມານຂອງລັດ.
- ບັນດາວິສາຫະກິດຂອງລັດ.
- ວິສາຫະກິດປະສົມທີ່ລັດຖືຮຸ້ນ.

<u>ມາດຕາ 04:</u> ຂອບເຂດຍົກເວັ້ນ.

ການປະມູນທີ່ມີລັກສະນະສະເພາະດ້ວຍເຫດຜົນຄວາມລັບ, ຄວາມຫມັ້ນຄົງ ແລະຄວາມປອດໄພຂອງຊາດ ແມ່ນບໍ່ໄດ້ນຳໃຊ້ຕາມຂໍ້ກຳນົດຂອງດຳລັດ ສະບັບນີ້, ແຕ່ສຳລັບການຈັດຊື້ສິນຄ້າ, ອຸປະກອນ ແລະ ພາຫະນະຮັບໃຊ້ວຽກບໍລິຫານປົກກະ ຕິ , ວຽກງານການກໍ່ສ້າງ-ສ້ອມແປງອາຄານສຳນັກງານ ຫ້ອງການ, ໂຮງຮຽນ, ໂຮງຫມໍ, ເຮືອນຢູ່ ທີ່ຂຶ້ນກັບຂະແໜງການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຕ້ອງປະຕິບັດຕາມຂໍ້ກຳນົດຂອງດຳລັດສະບັບນີ້.

<u>ມາດຕາ 05:</u> ຜູ້ເຂົ້າແຂ່ງຂັນປະມູນ ປະກອບມີ:

1. ນິຕິບຸກຄົນ, ບໍລິສັດ ແລະວິສາຫະກິດ ທີ່ສ້າງຕັ້ງຂຶ້ນໃນ ສປປ ລາວ ໂດຍຖືກຕ້ອງຕາມກົດຫມາຍ ແລະປະຕິບັດພັນທະດ້ານ ພາສີ-ອາກອນ ເປັນປົກກະຕິ ແລະຄົບຖ້ວນ.
2. ບໍລິສັດສາກົນ ທີ່ສົນໃຈ ແລະມີຄຸນວຸດທິເຫມາະສົມ, ກໍ່ສາມາດເຂົ້າຮ່ວມປະມູນແຂ່ງຂັນໃນການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະການບໍລິການດ້ວຍທຶນຂອງລັດໄດ້.

3. ສຳລັບການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະການບໍລິການທີ່ມີມູນຄ່າສູງ, ໂຄງການຂະໜາດໃຫຍ່ ແລະຄົບຊຸດ ທີ່ບໍລິສັດດຽວ ບໍ່ມີຄວາມສາມາດພຽງພໍນັ້ນ ສາມາດອະນຸຍາດ ໃຫ້ບໍລິສັດພາຍໃນຮ່ວມກັນ ຫລືບໍລິສັດພາຍໃນຮ່ວມກັບບໍລິສັດສາກົນ ເພື່ອເຂົ້າປະມູນແຂ່ງຂັນໂຄງການສະເພາະໃດໜຶ່ງໄດ້ໃນຮູບການບໍລິສັດຮ່ວມ.

<u>ມາດຕາ 06:</u> ການປະມູນ.

ທຸກໆການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະການບໍລິການທີ່ນຳໃຊ້ທຶນຂອງລັດ ຕ້ອງໄດ້ດຳເນີນການປະມູນຕາມລະບຽບການ ທີ່ກຳນົດໄວ້ຢ່າງຖືກຕ້ອງ ແລະຄົບຖ້ວນ. ການຈັດຊື້ດ້ວຍຮູບການເຈລະຈາໂດຍກົງ ແມ່ນໃຫ້ປະຕິບັດຕາມມາດຕາ 13 ຂອງດຳລັດສະບັບນີ້ເທົ່ານັ້ນ.

<u>ມາດຕາ 07:</u> ການຈັດບັນຊີລາຍຊື່ບໍລິສັດ.

ເພື່ອເປັນບ່ອນອີງໃນການປະເມີນດ້ານຄຸນນະວຸດທິ ຂອງຜູ້ເຂົ້າແຂ່ງຂັນປະມູນ, ມອບໃຫ້ກະຊວງການເງິນ ສົມທົບກັບກະຊວງ, ຂະແໜງການ ທີ່ກ່ຽວຂ້ອງ ຈັດບັນຊີລາຍຊື່ບໍລິສັດ ຫລືນິຕິບຸກຄົນ ແລະລວມທັງບໍລິສັດສາກົນ ທີ່ມີຄວາມສາມາດ, ປະສົບການ ແລະຖານະການເງິນດີ ອອກໃນເດືອນ ກັນຍາ ຂອງທຸກໆປີ ພ້ອມ ທັງແຈ້ງມາດຕະຖານໃນການຈັດບັນຊີລາຍຊື່ນັ້ນຢ່າງເປີດເຜີຍ. ຈຳນວນຂອງ ບໍລິສັດຫລືນິຕິບຸກຄົນໃນບັນຊີລາຍຊື່ດັ່ງກ່າວນີ້ສາມາດເພີ້ມ ຫລືຫລຸດລົງໄດ້ໃນ ກາງປີຂອງແຕ່ລະປີ.

<u>ມາດຕາ 08:</u> ການກຳນົດລາຍຈ່າຍບໍລິຫານ.

ເພື່ອເປັນບ່ອນອີງໃຫ້ແກ່ການກຳນົດລາຍຈ່າຍບໍລິຫານ ສຳລັບອົງການຈັດຕັ້ງຂອງລັດໃນການປະມູນຈັດຊື້ ດ້ວຍການສົມທຽບລາຄາຕາມທີ່ໄດ້ກຳນົດຢູ່ໃນມາດຕາ 14 ຂອງດຳລັດສະບັບນີ້, ກະຊວງການເງິນສົມທົບກັບກະຊວງການຄ້າ, ບັນດາກະຊວງ ແລະອົງການທຽບເທົ່າທີ່ກ່ຽວຂ້ອງຄົ້ນຄວ້າກຳນົດສາລະບານລາຄາ ຫືວໜ່ວຍສິນຄ້າພ້ອມດ້ວຍມາດຕະຖານເຕັກນິກທີ່ຈຳເປັນ, ຊຶ່ງອົງການຈັດຕັ້ງຂອງລັດໄດ້ນຳໃຊ້ເປັນຈຳນວນຫລາຍໃນທຸກໆ 6 ເດືອນ.

ມາດຕາ 09: ການສົ່ງເສີມບໍລິສັດ ແລະຜະລິດຕະພັນພາຍໃນ.

ໃນການດໍາເນີນການປະມູນ ແຕ່ລະຮູບການນັ້ນ, ບໍລິສັດ ແລະຜະລິດຕະພັນພາຍໃນປະເທດ ຕ້ອງໄດ້ຮັບການສົ່ງເສີມຕາມເງື່ອນໄຂລຸ່ມນີ້:

1. ບໍລິສັດພາຍໃນ ທີ່ບໍ່ແມ່ນສາຂາຂອງບໍລິສັດຕ່າງປະເທດ ທີ່ສາມາດຕອບສະໜອງສິນຄ້າ, ດໍາເນີນການກໍ່ສ້າງ-ສ້ອມແປງ ແລະບໍລິການດ້ວຍຄຸນນະພາບ ເທົ່າທຽມກັນກັບ ບໍລິສັດຕ່າງປະເທດ, ໃນເວລາປະເມີນການປະມູນຕ້ອງໃຫ້ ສິດທິພິເສດຕໍ່ບໍລິສັດພາຍໃນ.
2. ບໍ່ອະນຸຍາດໃຫ້ນໍາໃຊ້ທຶນຂອງລັດ ເພື່ອຊື້ສິນຄ້າທີ່ຜະລິດຢູ່ຕ່າງປະເທດ, ຖ້າຫາກວ່າສິນຄ້ານັ້ນ ສາມາດຜະລິດໄດ້ຢູ່ພາຍໃນປະເທດ ແລະມີຄຸນນະພາບ ເທົ່າທຽມກັນ.
3. ການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະການບໍລິການດ້ວຍທຶນຂອງລັດ ທີ່ນໍາໃຊ້ງົບປະມານພາຍໃນທັງຫມົດນັ້ນ, ຕ້ອງໃຫ້ບຸລິມະສິດແກ່ບໍລິສັດພາຍໃນ.

## ໝວດທີ 2
## ຮູບການ ແລະຂັ້ນຕອນ ການປະມູນ

ມາດຕາ 10: ຮູບການ ການປະມູນມີດັ່ງນີ້:

- ການປະມູນເປີດກວ້າງ;
- ການປະມູນວົງແຄບ;
- ການປະມູນດ້ວຍການເຈລະຈາໂດຍກົງ;
- ການປະມູນສົມທຽບລາຄາ.

ມາດຕາ 11: ການປະມູນເປີດກວ້າງ.

ການປະມູນເປີດກວ້າງ ຕ້ອງດໍາເນີນໄປຕາມຂັ້ນຕອນດັ່ງນີ້:

1. ເອກະສານປະມູນ ຕ້ອງປະກອບໃຫ້ຄົບຖ້ວນ ແລະຊັດເຈນ, ຕ້ອງລະບຸລາຍການສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະການບໍລິການ ພ້ອມທັງກໍານົດ ມາດຕະຖານເຕັກນິກ, ສະຖານທີ່ມອບ-ຮັບສິນຄ້າ, ເວລາສໍາເລັດກິດຈະການ, ເງື່ອນໄຂການ

ປະມູນ ແລະເງື່ອນໄຂສັນຍາ, ພ້ອມດ້ວຍມາດຕະຖານ ທີ່ນຳໃຊ້ໃນການປະເມີນການປະມູນ, ເພື່ອໃຫ້ຜູ້ເຂົ້າແຂ່ງຂັນປະມູນຮັບຊາບ ລ່ວງໜ້າຢ່າງຖືກຕ້ອງ.

2. ການປະກາດປະມູນ ຕ້ອງໄດ້ປະກາດຜ່ານສື່ມວນຊົນ ຫຼືທາງລັດຖະການຢ່າງກວ້າງຂວາງ. ກຳນົດເວລາກະກຽມ ແລະສົ່ງຊອງປະມູນຢ່າງຫນ້ອຍ 45 ວັນ ຮອດວັນປິດຮັບເອກະສານປະມູນ.
3. ເອກະສານປະມູນທັງຫມົດ ຕ້ອງໄດ້ເປີດໂດຍທັນທີໂລດ ພາຍຫລັງປິດຮັບ, ຕາມວັນ, ເວລາ ແລະສະຖານທີ່ ທີ່ໄດ້ກຳນົດໄວ້ຢູ່ໃນເອກະສານປະມູນໂດຍຊ້ອງຫນ້າຜູ້ເຂົ້າຮ່ວມແຂ່ງຂັນປະມູນ ຫຼືຜູ້ຕາງໜ້າ.
4. ພາຍຫລັງເປີດຊອງປະມູນແລ້ວ, ຜູ້ເຂົ້າແຂ່ງຂັນປະມູນ ຈະບໍ່ສາມາດດັດແກ້ ຫລືເພີ່ມເຕີມເອກະສານ ແລະຂໍ້ສະເຫນີໃດໆໄດ້ອີກ. ນອກຈາກກໍລະນີທີ່ ຄະນະກຳມະການປະມູນ ຕ້ອງການ ຂໍ້ມູນເພີ້ມເຕີມເທົ່ານັ້ນ. ຂໍ້ມູນເພີ້ມເຕີມດັ່ງ ກ່າວນີ້ຕ້ອງໄດ້ແຈ້ງເປັນລາຍລັກອັກສອນ ຫາຜູ້ເຂົ້າແຂ່ງຂັນປະມູນ ເພື່ອຮັບຊາບນຳ.
5. ການພິຈາລະນາ ແລະການປະເມີນການປະມູນ ຕ້ອງໄດ້ປະຕິບັດຕາມມາດຖານ ແລະເງື່ອນໄຂ ທີ່ໄດ້ລະບຸໄວ້ໃນເອກະສານປະມູນ. ການປະເມີນການປະມູນຕ້ອງໄດ້ຊີ້ແຈງໃຫ້ເຫັນຂໍ້ສະເໜີຕ່າງໆຂອງຜູ້ເຂົ້າແຂ່ງຂັນປະມູນທັງຫມົດ, ເຫດຜົນສະເຫນີເອົາຜູ້ຊະນະການປະມູນ ເພື່ອນາສະເຫນີ ຫາອົງການຈັດຕັ້ງປະຕິບັດໂຄງການຕົກລົງຮັບຮອງເອົາໂດຍສອດຄ່ອງກັບມາດຕາ 36.
6. ຖ້າຫາກເຫັນວ່າ ຜູ້ເຂົ້າແຂ່ງຂັນປະມູນທັງໝົດ ບໍ່ຕອບສະຫນອງໄດ້ຕາມມາດຖານ ແລະເງື່ອນໄຂທີ່ໄດ້ກຳນົດໄວ້ໃນເອກະສານປະມູນ, ຄະນະກຳມະການປະມູນສາມາດປະກາດຍົກເລີກການປະມູນ ແລະດຳເນີນການປະມູນຄືນໃຫມ່ໄດ້ໂດຍສອດຄ່ອງກັບລະບຽບການຈັດຕັ້ງປະຕິບັດດຳລັດສະບັບນີ້.

<u>ມາດຕາ 12:</u> ການປະມູນວົງແຄບ.

ການປະມູນວົງແຄບ ຕ້ອງດຳເນີນໂດຍສອດຄ່ອງຕາມກໍລະນີ ດັ່ງລຸ່ມນີ້:

1. ມູນຄ່າສັນຍາບໍ່ສູງ;
2. ຜູ້ສະຫນອງສິນຄ້າ ຫລືຜູ້ຮັບເຫມົາ ມີຈຳນວນຈຳກັດ.

ຂັ້ນຕອນການປະມູນວົງແຄບ ແມ່ນດຳເນີນຄືກັບ ຂັ້ນຕອນການປະມູນ ເປີດກວ້າງ ຕາມມາດຕາ 11, ຍົກເວັ້ນຂໍ້ທີ 2 ຄື: ບໍ່ມີການປະກາດປະມູນ. ຜູ້ຈັດຊື້ ຫລືເຈົ້າຂອງໂຄງການ ຈະສົ່ງຫນັງສືເຊີນປະມູນຫາສະເພາະຜູ້ສະຫນອງ ຫລືຜູ້ຮັບເຫມົາທີ່ເຫັນວ່າມີປະສົບການ ແລະຮັບປະກັນໃນການແຂ່ງຂັນດ້ານລາຄາ ຫລືເຊີນທັງຫມົດ ຖ້າວ່າຈຳນວນຜູ້ສະຫນອງ ຫລືຜູ້ຮັບເຫມົາມີຈຳນວນຈຳກັດ.

<u>ມາດຕາ 13:</u> ການປະມູນດ້ວຍການເຈລະຈາໂດຍກົງ.

ການປະມູນດ້ວຍການເຈລະຈາໂດຍກົງ ສາມາດປະຕິບັດໄດ້, ໃນເມື່ອໄດ້ດຳເນີນການປະມູນເປີດກວ້າງ ແລະວົງແຄບແລ້ວແຕ່ບໍ່ມີຜົນສຳເລັດ ແລະຕ້ອງ ໄດ້ຮັບການອະນຸຍາດເປັນກໍລະນີສະເພາະ ຈາກກະຊວງ ຫລືອົງການຈັດຕັ້ງປະຕິບັດໂຄງການຂັ້ນຕ່າງໆ ໂດຍສອດຄ່ອງກັບເງື່ອນໄຂທີ່ລະບຸໄວ້ໃນລະບຽບການຈັດຕັ້ງປະຕິບັດດຳລັດ ສະບັບນີ້.

<u>ມາດຕາ 14:</u> ການປະມູນສົມທຽບລາຄາ.

ການປະມູນສົມທຽບລາຄາ ປະຕິບັດໄດ້ສຳລັບການປະມູນຈັດຊື້ສິນຄ້າ ທີ່ມີຈຳນວນບໍ່ຫລາຍ ແລະມູນຄ່າບໍ່ສູງ, ການກໍ່ສ້າງ-ສ້ອມແປງຂະຫນາດນ້ອຍ ແລະການບໍລິການທີ່ມີມູນຄ່າຕ່ຳ, ເຄື່ອງທີ່ຮັບໃຊ້ໃນວຽກບໍລິຫານປະຈຳວັນ ແລະເປັນປົກກະຕິ ເຊັ່ນ: ອຸປະກອນ, ເຄື່ອງໃຊ້ ຫ້ອງການ, ອຸປະກອນວິຊາສະເພາະ ທາງດ້ານເຕັກນິກ, ຮັບໃຊ້ຄົ້ນຄວ້າ ແລະທົດລອງວິທະຍາສາດ. ການປະມູນດ້ວຍຮູບການນີ້ ຕ້ອງມີຜູ້ສະເຫນີລາຄາເຂົ້າແຂ່ງຂັນຢ່າງຫນ້ອຍຈາກ 3 ຜູ້ສະຫນອງ ຫລືຜູ້ຮັບເຫມົາ.

<u>ມາດຕາ 15:</u> ການຄັດເລືອກທີ່ປຶກສາ ຫລືຊ່ຽວຊານ.

ການຄັດເລືອກທີ່ປຶກສາ ຫລືຊ່ຽວຊານຕ້ອງດຳເນີນຕາມຂັ້ນຕອນດັ່ງລຸ່ມນີ້:

1. ຄັດເລືອກ ເບື້ອງຕົ້ນເອົາທີ່ປຶກສາ ຫລືຊ່ຽວຊານຢ່າງຫນ້ອຍ 3 ບໍລິສັດ ຫລືນິຕິບຸກຄົນ, ຊຶ່ງຜູ້ຈັດຊື້ ຫລືເຈົ້າຂອງໂຄງການ ເຫັນວ່າມີຄວາມເໝາະສົມກວ່າໝູ່, ສົ່ງຫນັງສືເຊີນບໍລິສັດທີ່ປຶກສາ ຫລືຊ່ຽວຊານນັ້ນ ໂດຍລະບຸຈຸດປະສົງ, ເປົ້າໝາຍ, ໜ້າວຽກຂອງທີ່ປຶກສາ ຫລືຊ່ຽວຊານ ແລະເວລາສຳເລັດຫນ້າວຽກ, ວັນເວລາ ແລະສະຖານທີ່ສົ່ງຂໍ້ສະເຫນີ.

2. ການປະເມີນຂໍ້ສະເໜີ ຕ້ອງດຳເນີນຕາມສອງວິທີການພື້ນຖານຄື:

- ປະເມີນດ້ານສຸຂະພາບ ແລະການເງິນ ພ້ອມກັນ.
- ປະເມີນດ້ານຄຸນນະພາບກ່ອນ, ແລ້ວຈຶ່ງປະເມີນດ້ານການເງິນຕາມຫລັງ.

3. ສຳລັບການຄັດເລືອກເອົາບໍລິສັດທີ່ປຶກສາ ຫລືຊ່ຽວຊານ ດ້ວຍການເຈລະຈາ ໂດຍກົງ ຕ້ອງໄດ້ຮັບ ການອະນຸຍາດເປັນກໍລະນີສະເພາະຈາກກະຊວງ ຫລືອີງ ການຈັດຕັ້ງປະຕິບັດໂຄງການຂັ້ນຕ່າງໆ, ຊຶ່ງໄດ້ລະບຸໄວ້ໃນລະບຽບການຈັດຕັ້ງ ປະຕິບັດດຳລັດສະບັບນີ້.

<u>ມາດຕາ 16:</u> ການປະເມີນດ້ານຄຸນນະວຸດທິຂອງຜູ້ເຂົ້າແຂ່ງຂັນປະມູນ.

ສຳລັບໂຄງການຂະໜາດໃຫ່ຍ, ເຕັກນິກຄົບຊຸດ, ມູນຄ່າສູງນັ້ນ, ກ່ອນຈະດຳ ເນີນການປະມູນແຂ່ງຂັນ ຕ້ອງໄດ້ປະເມີນຄຸນນະວຸດທິຂອງຜູ້ເຂົ້າແຂ່ງຂັນ ປະມູນ ກ່ອນ. ການປະເມີນດ້ານຄຸນນະວຸດທິຂອງຜູ້ເຂົ້າແຂ່ງຂັນປະມູນ ຕ້ອງດຳເນີນຕາມ ຮູບການປະມູນເປີດກວ້າງ ໂດຍລະບຸມາດຕະຖານ ແລະເງື່ອນໄຂຕ່າງໆ ສຳລັບການ ປະເມີນ ແລະແຈ້ງໃຫ້ທຸກໆບໍລິສັດທີ່ມີຄວາມສົນໃຈຮັບຊາບ ແລະຍື່ນເອກະສານເພື່ອ ໃຫ້ຄະນະກຳມະການປະມູນປະເມີນດ້ານຄຸນນະວຸດທິ. ບໍລິສັດໃດ ທີ່ຕອບສະ ໜອງຕາມມາດຕະຖານ ແລະເງື່ອນໄຂທີ່ໄດ້ກຳນົດໃວ້ໃນເອກະສານ ການປະເມີນ ຄຸນນະວຸດທິ, ຈຶ່ງເຊີນເຂົ້າຮ່ວມການປະມູນແຂ່ງຂັນດ້ານລາຄາ.

<u>ມາດຕາ 17:</u> ການປະມູນແບບສອງຂັ້ນຕອນ.

ສຳລັບໂຄງການຂະໜາດໃຫຍ່, ມູນຄ່າສູງທີ່ອີງການຈັດຕັ້ງປະຕິບັດໂຄງ ການບໍ່ມີປະສົບການໃນ ການກຳນົດມາດຕະຖານເຕັກນິກໄດ້ຊັດເຈນນັ້ນ ຫລືການ ອອກແບບລະອຽດໂຄງການ ມີມູນຄ່າສູງ ຕ້ອງໄດ້ດາເນີນການປະມູນ ແບບສອງ ຂັ້ນຕອນ. ການປະເມີນແບບສອງຂັ້ນຕອນ ຕ້ອງປະຕິບັດດັ່ງນີ້: ສະເໜີໃຫ້ບໍລິສັດ ທີ່ສົນໃຈຍື່ນຂໍ້ສະເໜີທາງດ້ານເຕັກນິກ ແລະວິທີການປະຕິບັດກ່ອນ, ເພື່ອປະເມີນ ແລະຮັບຮອງເອົາມາດຕະຖານເຕັກນິກທີ່ເຫມາະສົມກ່ອນ. ຫລັງຈາກນັ້ນ, ຈຶ່ງດຳ ເນີນການປະມູນແຂ່ງຂັນດ້ານລາຄາ.

<u>ມາດຕາ 18:</u> ການປະມູນ ທີ່ນຳໃຊ້ທຶນຊ່ວຍເຫລືອລ້າ ຫລືກູ້ຢືມຈາກຕ່າງປະເທດ.

ຖ້າວ່າໃນສັນຍາລະຫວ່າງລັດຖະບານກັບຜູ້ໃຫ້ທຶນໄດ້ລະບຸກ່ຽວກັບລະບຽບ

ການປະມູນຈັດຊື້ເປັນການສະເພາະແມ່ນໃຫ້ປະຕິບັດຕາມສັນຍານັ້ນ ຫລືປະຕິບັດຕາມເງື່ອນໄຂຂອງຜູ້ໃຫ້ທຶນນັ້ນ. ໃນກໍລະນີບໍ່ໄດ້ກຳນົດ ຫລືບໍ່ມີຂໍ້ຜູກພັນອື່ນໆ ແມ່ນໃຫ້ປະຕິບັດຕາມຂໍ້ກຳນົດຂອງດຳລັດ ສະບັບນີ້ຢ່າງຄົບຖ້ວນ.

<u>ມາດຕາ 19:</u> ວົງເງິນ (ມູນຄ່າ).

ກຳນົດສຳລັບແຕ່ລະຮູບການປະມູນນັ້ນ, ມອບໃຫ້ກະຊວງການເງິນ ເປັນຜູ້ກຳນົດໃນແຕ່ລະໄລຍະຕາມຄວາມເຫມາະສົມ ໂດຍໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ.

<u>ມາດຕາ 20:</u> ເງິນຄ້ຳປະກັນການປະມູນ.

ການປະມູນດ້ວຍຮູບການໃດຫນຶ່ງ,ຍົກເວັ້ນຮູບການເຈລະຈາໂດຍກົງ ແລະການສົມທຽບລາຄາ, ຜູ້ເຂົ້າແຂ່ງຂັນປະມູນຕ້ອງໄດ້ວາງເງິນ ຄ້ຳປະກັນການປະມູນ. ໄລຍະເວລາຄ້ຳປະກັນການປະມູນ ຕ້ອງຫລາຍກວ່າໄລຍະເວລາການປະມູນ ມີຜົນໃຊ້ໄດ້ 30 ວັນ. ຖ້າວ່າໄລຍະເວລາການປະມູນມີຜົນໃຊ້ໄດ້ ຕ້ອງຕໍ່ເວລາຕື່ມຕາມມາດຕາ 21, ເງິນຄ້ຳປະກັນການປະມູນ ກໍຕ້ອງຕໍ່ໄລຍະຄ້ຳປະກັນເຫມືອນກັນ. ຜູ້ຈັດຊື້ ຫລືເຈົ້າຂອງໂຄງການ ຕ້ອງໄດ້ສົ່ງເງິນຄ້ຳປະກັນການປະມູນຄືນໃຫ້ຜູ້ທີ່ບໍ່ ຊະນະການປະມູນ, ຫຼັງຈາກທີ່ໄດ້ປະກາດຜູ້ຊະນະການປະມູນ. ຖ້າວ່າຜູ້ຊະນະການປະມູນຫາກປະຕິເສດການເຊັນສັນຍາກັບຜູ້ຈັດຊື້ ຫລືເຈົ້າຂອງໂຄງການ ໂດຍບໍ່ມີເຫດຜົນທີ່ເຊື່ອຖືໄດ້ນັ້ນ, ຜູ້ຈັດຊື້ ຫລືເຈົ້າຂອງໂຄງການສາມາດຍຶດເອົາເງິນຄ້ຳ ປະກັນການປະມູນນັ້ນໄດ້ໂດຍບໍ່ມີການຕໍ່ວ່າໃດໆ.

<u>ມາດຕາ 21:</u> ການປະມູນມີຜົນໃຊ້ໄດ້.

ການປະມູນມີຜົນໃຊ້ໄດ້ຢ່າງຫນ້ອຍ 30 ວັນ ໂດຍເລີ້ມຈາກວັນທີ່ເປີດຊ່ອງປະມູນ, ເພື່ອໃຫ້ຄະນະກຳມະການປະມູນມີເວລາພຽງພໍໃນການພິຈາລະນາ ແລະ ປະເມີນການປະມູນ. ຖ້າຫາກມີຄວາມຈຳເປັນທີ່ຕ້ອງໄດ້ແກ່ຍາວການພິຈາລະນາ ແລະປະເມີນການປະມູນ ໂດຍໄດ້ຮັບການເຫັນດີຈາກກະຊວງການເງິນ. ຜູ້ຈັດຊື້ ຫລືເຈົ້າຂອງໂຄງການ ຕ້ອງໄດ້ສະເຫນີເປັນລາຍລັກອັກສອນຫາຜູ້ເຂົ້າແຂ່ງຂັນປະມູນທັງຫມົດ ເພື່ອຢັ້ງຢືນ ແລະຕໍ່ໄລຍະເວລາການປະມູນມີຜົນໃຊ້ໄດ້ຕື່ມ.

## ໝວດທີ 3
## ປະເພດ, ຮູບແບບຊໍາລະ ແລະເນື້ອໃນຂອງສັນຍາ
## ສະໜອງສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະການບໍລິການ.

<u>ມາດຕາ 22:</u> ປະເພດຂອງສັນຍາການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະການບໍລິການ ມີດັ່ງນີ້:

1. ສັນຍາສະໜອງອຸປະກອນ ແລະສິນຄ້າ.
2. ສັນຍາກໍ່ສ້າງ ຫລືສ້ອມແປງ.
3. ສັນຍາບໍລິການ.

<u>ມາດຕາ 23:</u> ຮູບແບບການຊໍາລະ.

ສັນຍາການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະການບໍລິການ, ຖ້າໄລຍະການຈັດຕັ້ງປະຕິບັດບໍ່ເກີນ 1 ປີນັ້ນ ແມ່ນໃຫ້ກາໍນົດມູນຄ່າ ແລະ ສະກຸນເງິນຊໍາລະຄົງຕົວຕາມສັນຍາ ໂດຍນໍາໃຊ້ຮູບແແບຊໍາລະດັ່ງນີ້:

1. ສັນຍາສະໜອງສິນຄ້າ, ລວມທັງມູນຄ່າການຕິດຕັ້ງ ສາມາດຊໍາລະເປັນງວດດຽວ ຫລືຫລາຍງວດກໍ່ໄດ້, ແຕ່ຕ້ອງລະບຸໄວ້ໃນສັນຍາ.
2. ສັນຍາການກໍ່ສ້າງ-ສ້ອມແປງ ສາມາດຊໍາລະໄດ້ຕາມຮູບແບບໃດໜຶ່ງ ດັ່ງນີ້:

- ຕາມ ລາຄາມອບເໝົາຂາດຕົວ ສໍາລັບກິດຈະການຂະໜາດນ້ອຍ;
- ຕາມ “ໃບສະເໜີລາຄາ” ຊຶ່ງໄດ້ກໍານົດລາຄາຫົວໜ່ວຍ ແລະບໍລິມາດ ວຽກຢູ່ໃນສັນຍາ;
- ຕາມ “ໃບເກັບເງິນ” ໃນກໍລະນີ ບໍ່ສາມາດກໍານົດບໍລິມາດວຽກໄດ້ເຊັ່ນ: ວຽກບໍາລຸງຮັກສາ, ການຂຸດຄົ້ນດິນ, ການສໍາຫຼວດພື້ນດິນ, ການທໍາ ຄວາມສະອາດຄອງເໝືອງ ຫລືແລວນໍ້າຕ່າງໆ.

3. ສັນຍາບໍລິການທີ່ປຶກສາຫລືຊ່ຽວຊານ ສາມາດຊໍາລະຕາມລາຄາແບບມອບເໝົາຕາມໜ້າວຽກ ຫລືຕາມເວລາ (ຄົນ/ເດືອນ), ໃນກໍລະນີນີ້ ຕ້ອງໄດ້ກາໍນົດ ໜ້າວຽກໃຫ້ຊັດເຈນເທົ່າທີ່ຈະເຮັດໄດ້.

ມາດຕາ 24: ສະກຸນເງິນໃນການຊໍາລະ.

ການກໍານົດສະກຸນເງິນເພື່ອຊໍາລະຕາມສັນຍາກັບນິຕິບຸກຄົນ ຫລືບໍລິສັດພາຍໃນ ຕ້ອງຊໍາລະເປັນເງິນກີບ, ສ່ວນສັນຍາຊື້ສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະການບໍລິການຈາກຕ່າງປະເທດ, ຊຶ່ງແມ່ນບໍລິສັດຕ່າງປະເທດ ເປັນຜູ້ສະໜອງ ຫລືຜູ້ຮັບເໝົານັ້ນຕ້ອງປະຕິບັດຕາມລັດຖະບັນຍັດ ວ່າດ້ວຍການຄຸ້ມຄອງເງິນຕາ ຕ່າງປະເທດ ແລະວັດຖຸມີຄ່າ, ສະບັບເລກທີ 01/ສປປ, ລົງວັນທີ 9 ສິງຫາ 2002.

ມາດຕາ 25: ການດັດແກ້ລາຄາ.

ແມ່ນປະຕິບັດໄດ້ສໍາລັບສັນຍາ ທີ່ມີໄລຍະຈັດຕັ້ງປະຕິບັດເກີນ 1 ປີຂຶ້ນໄປ, ແລະກໍລະນີລາຄາຫົວໜ່ວຍໃນທ້ອງຕະຫຼາດຫາກເໜັງຕີງແຮງ (ເພີ້ມ ຫລືຫຼຸດ) ແຕ່ລະຝ່າຍສາມາດສະເໜີດັດແກ້ລາຄາຫົວໜ່ວຍໄດ້ ໂດຍຕ້ອງນໍາເອົາຂໍ້ມູນມາຢັ້ງຢືນເພື່ອສົມທຽບໃສ່ໄລຍະເວລາເຊັນສັນຍາ. ການດັດແກ້ລາຄາຫົວໜ່ວຍດ້ວຍການເພີ້ມ ຫລືຫຼຸດໄດ້ສະເພາະຣ່ວງລາຍຈ່າຍທີ່ພົວພັນເຖິງຄ່າແຮງງານ ແລະວັດສະດຸກໍ່ສ້າງເທົ່ານັ້ນ. ສ່ວນຣ່ວງລາຍຈ່າຍບໍລິຫານ, ຂົນສົ່ງ, ການປະກັນໄພ ແລະ ກໍາໄລຂອງຜູ້ສະໜອງ ຫລືຜູ້ຮັບເໝົາບໍ່ສາມາດດັດແກ້ໄດ້.

ມາດຕາ 26: ວິທີການຊໍາລະ.

ທຸກໆວິທີການຊໍາລະໃນສັນຍາ ຕ້ອງໄດ້ປະຕິບັດຕາມລະບຽບການ ດັ່ງນີ້:

1. ການຊໍາລະຄ່າສິນຄ້າທີ່ຊື້ນໍາບຸກຄົນ ຫຼືບໍລິສັດຢູ່ພາຍໃນປະເທດ ຕ້ອງຊໍາລະພາຍຫຼັງທີ່ໄດ້ຮັບສິນຄ້າເຂົ້າສາງຂອງຜູ້ຈັດຊື້ ຫລືເຈົ້າຂອງໂຄງການ ບົນພື້ນຖານມີເອກະສານຢັ້ງຢືນມອບຮັບຢ່າງຄົບຖ້ວນ.
2. ການຊໍາລະຄ່າສິນຄ້າ ທີ່ຊື້ຈາກຕ່າງປະເທດ, ຊຶ່ງຕ້ອງໄດ້ໂອນເງິນໄປຕ່າງປະເທດນັ້ນ, ໃຫ້ຊໍາລະຜ່ານທະນາຄານ ດ້ວຍການອອກຈົດໝາຍສິນເຊື່ອ ທີ່ສາກົນຮັບຮູ້ ຫລືຮູບການອື່ນໆຖ້າມີ.
3. ການຊໍາລະເງິນລ່ວງໜ້າ ປະຕິບັດໄດ້ສ່ວນໃດສ່ວນໜຶ່ງ ພາຍຫລັງເຊັນສັນຍາ, ການຊໍາລະນີ້ ບໍ່ເກີນ 15% ຂອງມູນຄ່າຕາມສັນຍາ, ຊຶ່ງຜູ້ສະໜອງ ຫລືຜູ້ຮັບເໝົາ ຕ້ອງມີໃບຄໍ້າປະກັນຈາກທະນາຄານໃນມູນຄ່າເທົ່າກັນ ຫລືບໍ່ເກີນ 20% ຂອງມູນຄ່າສັນຍາ, ຖ້າຫາກຜູ້ຮັບເຫມົາໄດ້ນໍາເອົາກົນຈັກ, ອຸປະກອນ ແລະ ແຮງ

ງານມາຮອດສະໜາມແລ້ວ. ຫລັງຈາກນັ້ນ ແມ່ນໃຫ້ຊໍາລະຕາມຄວາມຄືບໜ້າຂອງວຽກ.

4. ການຊໍາລະຕາມຄວາມຄືບໜ້າຂອງວຽກງານ ແມ່ນອີງໃສ່ເອກະສານຢັ້ງຢືນ ການກວດກາບໍລິມາດວຽກທີ່ສໍາເລັດຕົວຈິງຂອງຄະນະກໍາມະການ, ຊຶ່ງອົງການຈັດຕັ້ງປະຕິບັດໂຄງການນັ້ນແຕ່ງຕັ້ງຂຶ້ນ ໂດຍສົມທົບກັບວິສະວະກອນ ຄວບຄຸມການກໍ່ສ້າງ-ສ້ອມແປງນັ້ນ ເປັນຜູ້ຢັ້ງຢືນ.
5. ການຊໍາລະຄ່າທີ່ປຶກສາ ຫລືຊ່ຽວຊານ ແມ່ນອີງໃສ່ມູນຄ່າສັນຍາ.
   - ຊໍາລະຕາມການສໍາເລັດຂອງໜ້າວຽກ, ຖ້າມູນຄ່າສູງ.
   - ຊໍາລະເທື່ອດຽວພາຍຫລັງວຽກສໍາເລັດ, ຖ້າມູນຄ່າຕໍ່າ.

<u>ມາດຕາ 27:</u> ເນື້ອໃນສັນຍາ.

ເນື້ອໃນສັນຍາແຕ່ລະປະເພດ ມອບໃຫ້ຄູ່ສັນຍາຕົກລົງກັນໂດຍໃຫ້ສອດຄ່ອງກັບກົດໝາຍ ວ່າດ້ວຍຂໍ້ຜູກພັນໃນສັນຍາ ຂອງ ສປປ ລາວ, ເລກທີ 02/90/ສປສ, ລົງວັນທີ 10 ກໍລະກົດ 1990.

<u>ມາດຕາ 28:</u> ການຄໍ້າປະກັນສັນຍາ

ການຄໍ້າປະກັນສັນຍາ ແມ່ນໃຫ້ປະຕິບັດຕາມມາດຕາ 25 ຂອງດໍາລັດ ວ່າດ້ວຍການຄຸ້ມຄອງ ການລົງທຶນຂອງລັດ, ເລກທີ 58/ນຍ, ລົງວັນທີ 22 ພຶດສະພາ 2002.

## ໝວດທີ 4
## ການຈັດຕັ້ງ, ສິດ ແລະຫນ້າທີ່ຂອງຄະນະກໍາມະການປະມູນ

<u>ມາດຕາ 29:</u> ຄະນະກໍາມະການປະມູນ.

ທຸກໆຮູບການປະມູນ ຕ້ອງໄດ້ແຕ່ງຕັ້ງ ຄະນະກໍາມະການປະມູນຂຶ້ນໂດຍແມ່ນອົງການຈັດຕັ້ງປະຕິບັດໂຄງການຢູ່ຂັ້ນສູນກາງ ຫລືທ້ອງຖິ່ນນັ້ນເປັນຜູ້ແຕ່ງຕັ້ງ.

ຄະນະກໍາມະການປະມູນ ຕ້ອງປະກອບມີ:

- ຂັ້ນກະຊວງ ແລະອົງການທຽບເທົ່າທີ່ມີຜູ້ຕາງຫນ້າກະຊວງ ແລະຕາງຫນ້າຜູ້ຈັດຊື້ ຫລືເຈົ້າຂອງໂຄງການ ແຕ່ 1 ຫາ 3 ທ່ານ, ຜູ້ຕາງຫນ້າກະຊວງການເງິນ 1 ທ່ານ,

ຄະນະກໍາມະການແຜນການ ແລະການຮ່ວມມື 1 ທ່ານ, ບັນດາກົມວິຊາການ ທີ່ກ່ຽວຂ້ອງບ່ອນລະ 1 ທ່ານ.

ນອກນີ້, ຍັງມີຜູ້ຕາງໜ້າ ຈາກກະຊວງການຕ່າງປະເທດ (ກົມຮ່ວມມືເສດຖະກິດກັບຕ່າງປະເທດ) 1 ທ່ານ, ສະເພາະການນໍາໃຊ້ທຶນຊ່ວຍເຫລືອລ້າ ຫລືກູ້ຢືມຈາກຕ່າງປະເທດນັ້ນ.

- ຂັ້ນທ້ອງຖິ່ນ ແລະພະແນກການ ມີຜູ້ຕາງໜ້າຫ້ອງວ່າການແຂວງ ແລະຜູ້ຈັດຊື້ ຫລືເຈົ້າຂອງໂຄງການແຕ່ 1 ຫາ 3 ທ່ານ, ຜູ້ຕາງໜ້າພະແນກການເງິນແຂວງ 1 ທ່ານ, ພະແນກແຜນການ ແລະ ການຮ່ວມມື 1 ທ່ານ, ຜູ້ຕາງໜ້າໜ່ວຍງານວິຊາການທີ່ກ່ຽວຂ້ອງບ່ອນລະ 1 ທ່ານ.

<u>ມາດຕາ 30:</u> ຄະນະກໍາມະການປະມູນດ້ວຍການເຈລະຈາໂດຍກົງ.

ອົງການຈັດຕັ້ງປະຕິບັດໂຄງການ ເປັນຜູ້ແຕ່ງຕັ້ງຄະນະກໍາມະການ ຢູ່ພາຍໃນກະຊວງ ຫລືອົງການທຽບເທົ່ານັ້ນ, ຊຶ່ງປະກອບມີສະມາຊິກແຕ່ 3 ຫາ 5 ທ່ານ.

<u>ມາດຕາ 31:</u> ຄະນະກໍາມະການປະມູນສົມທຽບລາຄາ.

ອົງການຈັດຕັ້ງປະຕິບັດໂຄງການ ຫລືອົງການທຽບເທົ່ານັ້ນ ເປັນຜູ້ແຕ່ງຕັ້ງຄະນະຮັບຜິດຊອບຢູ່ພາຍໃນຂຶ້ນ, ຊຶ່ງປະກອບມີສະມາຊິກແຕ່ 3 ຫາ 5 ທ່ານ ຫລືອົງການຈັດຕັ້ງປະຕິບັດໂຄງການນັ້ນ ສາມາດມອບໝາຍໃຫ້ຜູ້ຈັດຊື້ ຫລືເຈົ້າຂອງໂຄງການເປັນຜູ້ຮັບຜິດຊອບໃນການສົມທຽບລາຄາ.

<u>ມາດຕາ 32:</u> ຄະນະກໍາມະການປະມູນ ສໍາລັບການປະມູນທີ່ນໍາໃຊ້ທຶນຊ່ວຍເຫຼືອລ້າ ຫລືກູ້ຢືມຈາກຕ່າງປະເທດ.

ຖ້າວ່າສັນຍາລະຫວ່າງລັດຖະບານ ກັບຜູ້ໃຫ້ທຶນໄດ້ລະບຸກ່ຽວກັບການແຕ່ງຕັ້ງຄະນະກໍາມະການປະມູນ ແລະພິຈາລະນາຕົກລົງຮັບຮອງເອົາຜົນຂອງການ ປະມູນສະເພາະນັ້ນ ແມ່ນໃຫ້ປະຕິບັດຕາມສັນຍານັ້ນ ຫລືປະຕິບັດຕາມເງື່ອນໄຂ ຂອງຜູ້ໃຫ້ທຶນນັ້ນ.ໃນກໍລະນີບໍ່ໄດ້ກໍານົດ ຫລືບໍ່ມີຂໍ້ຜູກພັນອື່ນໆແມ່ນຕ້ອງປະຕິບັດ ຕາມດໍາລັດສະບັບນີ້.

ມາດຕາ 33: ສິດ ແລະໜ້າທີ່ຂອງຄະນະກຳມະການປະມູນ

ຄະນະກຳມະການປະມູນທຸກຂັ້ນມີສິດ ແລະໜ້າທີ່ໃນການກະກຽມ ເອກະສານປະມູນ, ດຳເນີນ ແລະປະເມີນການປະມູນ ເພື່ອສະເໜີຮັບຮອງເອົາຜູ້ຊະນະການປະມູນ. ຄະນະກຳມະການປະມູນຕ້ອງໄດ້ແຈ້ງໃຫ້ບໍລິສັດທີ່ບໍ່ໄດ້ຮັບໄຊຊະນະຊາບ ແລະຕ້ອງສົ່ງເງິນຄ້ຳປະກັນການປະມູນຄືນພາຍໃນ 7 ວັນ, ຫຼັງຈາກກະຊວງຫລືອົງການຈັດຕັ້ງປະຕິບັດໂຄງການ ໄດ້ຕົກລົງຮັບຮອງເອົາຜົນການປະມູນ ແລະປະກາດຜູ້ຊະນະການປະມູນ ແລະໄດ້ຮັບຕອບຕົກລົງເຊັນສັນຍາຈາກຜູ້ຊະນະການປະມູນແລ້ວ.

ມາດຕາ 34: ການພິຈາລະນາ ແລະການປະເມີນການປະມູນ

ຄະນະກຳມະການປະມູນຕ້ອງພິຈາລະນາ, ປະເມີນ ແລະພ້ອມທັງເຮັດບົດບັນທຶກການປະເມີນການປະມູນໃຫ້ສຳເລັດພາຍໃນ 15 ວັນ ແລະສົ່ງບົດລາຍງານຫາອົງການຈັດຕັ້ງປະຕິບັດໂຄງການ ເພື່ອຕົກລົງຮັບຮອງເອົາຜົນການປະມູນ. ຍົກເວັ້ນກໍລະນີທີ່ຈຳເປັນທີ່ຕ້ອງໄດ້ໃຊ້ເວລາໃນການພິຈາລະນາ ແລະປະເມີນການປະມູນເກີນກວ່າກຳນົດໄວ້, ຄະນະກຳມະການປະມູນ ຕ້ອງໄດ້ສະເໜີເປັນລາຍ ລັກອັກສອນເພື່ອອະນຸມັດເຫັນດີຈາກກະຊວງການເງິນກ່ອນ.

ມາດຕາ 35: ການຮັກສາຄວາມລັບ

ທຸກໆຂໍ້ມູນກ່ຽວກັບການພິຈາລະນາ, ການປະເມີນການປະມູນ ແລະ ຂໍ້ສະເໜີຕ່າງໆໃນການພິຈາລະນາຮັບຮອງເອົາຜູ້ຊະນະການປະມູນ, ຄະນະກຳມະການປະມູນ ຕ້ອງໄດ້ຮັກສາເປັນຄວາມລັບ ແລະບໍ່ສາມາດເປີດເຜີຍໃຫ້ຜູ້ເຂົ້າແຂ່ງຂັນປະມູນຫລືບຸກຄົນທີ່ບໍ່ມີຫນ້າທີ່ກ່ຽວຂ້ອງຮູ້ໄດ້ຈົນກວ່າໄດ້ມີການຕົກລົງຮັບ ຮອງເອົາຜົນການປະມູນ ແລະປະກາດຜູ້ຊະນະການປະມູນ.

ມາດຕາ 36: ການພິຈາລະນາຮັບຮອງເອົາຜົນການປະມູນ.

ພາຍຫຼັງສຳເລັດການປະເມີນການປະມູນແລ້ວ, ອົງການຈັດຕັ້ງປະຕິບັດໂຄງການ ຕ້ອງໄດ້ຈັດກອງປະຊຸມ ເພື່ອຮັບຮອງເອົາຜົນການປະມູນ ແລະປະກາດຜູ້ຊະນະການປະມູນ ໂດຍມີຜູ້ຕາງຫນ້າກະຊວງການເງິນເຂົ້າຮ່ວມນຳທຸກຄັ້ງ, ມອບໃຫ້ກະຊວງການເງິນ ເປັນຜູ້ກຳນົດຕຳແຫນ່ງບຸກຄົນທີ່ມີສິດພິຈາລະນາຮັບຮອງເອົາຜົນການປະມູນ

ແລະປະກາດຜູ້ຊະນະການປະມູນໂດຍຖືເອົາວົງເງິນ (ມູນຄ່າ) ທີ່ກຳນົດສຳລັບແຕ່ລະຮູບການປະມູນນັ້ນເປັນພື້ນຖານ.

ໃນກໍລະນີບໍ່ສາມາດຮັບຮອງເອົາຜົນການປະມູນ ແລະປະກາດຜູ້ຊະນະການປະມູນໄດ້ນັ້ນ, ບຸກຄົນທີ່ມີສິດພິຈາລະນາຮັບຮອງເອົາຜົນການປະມູນ ແລະ ປະກາດຜູ້ຊະນະການປະມູນບໍ່ມີສິດດັດແປງ ຫລືແນະນຳການປະເມີນຂອງຄະນະກຳມະການປະມູນໄດ້, ແຕ່ສາມາດສະເຫນີໃຫ້ຄະນະກຳມະການປະມູນ ທົບທວນຄືນຫາສາຍເຫດຕົ້ນຕໍທີ່ມີການປະເມີນນັ້ນບໍ່ໄດ້ຖືກຮັບຮອງເອົາ, ຖ້າຫາກການປະເມີນດັ່ງກ່າວບໍ່ສາມາດຕົກລົງຮັບຮອງເອົາໄດ້ນັ້ນ, ກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນທີ່ເປັນຜູ້ຈັດຊື້ ຫລືເຈົ້າຂອງໂຄງການຕ້ອງໄດ້ສົ່ງບົດປະເມີນດັ່ງກ່າວນີ້ຫາ ອົງການກວດກາແຫ່ງລັດເພື່ອກວດກາຄືນໃຫມ່.

<u>ມາດຕາ 37:</u> ການເຊັນສັນຍາ:

- ພາຍຫລັງ ອົງການຈັດຕັ້ງປະຕິບັດໂຄງການ ໄດ້ຕົກລົງຮັບຮອງເອົາຜົນຂອງການປະມູນແລ້ວ, ຄະນະກຳມະການປະມູນຕ້ອງໄດ້ແຈ້ງເປັນລາຍລັກອັກສອນໃຫ້ຜູ້ຊະນະການປະມູນຮັບຊາບ ແລະຜູ້ຊະນະການປະມູນຕ້ອງໄດ້ຕອບຕົກລົງເຊັນສັນຍາ.
- ກ່ອນຈະເຊັນສັນຍາກັບຜູ້ສະຫນອງ ຫລືຜູ້ຮັບເຫມົາ, ຜູ້ຈັດຊື້ ຫລືເຈົ້າຂອງໂຄງການຕ້ອງໄດ້ກວດກາຄືນວ່າ ຜູ້ຊະນະການປະມູນ ບໍ່ໄດ້ມີການປ່ຽນແປງ ສະພາບດ້ານຄຸນນະວຸດທິ ໃນຊ່ວງໄລຍະເວລາທີ່ໄດ້ຍື່ນຂໍ້ສະເຫນີປະມູນ ແລະຍັງມີຄວາມສາມາດພຽງພໍໃນການຈັດຕັ້ງປະຕິບັດສັນຍາໄດ້. ຖ້າຫາກເຫັນວ່າ ມີການປ່ຽນແປງດ້ານຄຸນນະວຸດທິ ທີ່ມີຜົນກະທົບຕໍ່ການຈັດຕັ້ງປະຕິບັດສັນຍານີ້, ຄະນະກຳມະການປະມູນ ຈະຕ້ອງໄດ້ພິຈາລະນາ ແລະສະເຫນີຕົກລົງ ປະກາດຜູ້ຊະນະຄືນໃຫມ່ໂດຍແມ່ນບໍລິສັດທີ່ໄດ້ລະດັບຖັດລົງມາ.
- ເອກະສານສັນຍາຕ້ອງເຊັນໂດຍຜູ້ຕາງຫນ້າທີ່ໄດ້ຖືກມອບຫມາຍ ຈາກອົງການຈັດຕັ້ງປະຕິບັດໂຄງການ ເຊັນຮ່ວມກັບຜູ້ຕາງຫນ້າທີ່ໄດ້ຮັບການມອບຫມາຍຈາກບໍລິສັດ.

## ໝວດທີ 5
## ການກວດກາ, ມາດຕະການຕໍ່ຜູ້ລະເມີດ ແລະການຕໍ່ອ່າ

ມາດຕາ 38: ການກວດກາ.

ການປະມູນຈັດຊື້ທີ່ນຳໃຊ້ທຶນຂອງລັດ ທີ່ເປັນວຽກງານສຳຄັນ ແລະມູນຄ່າສູງ, ກະຊວງການເງິນ (ຫ້ອງການຄຸ້ມຄອງຕິດຕາມການການຈັດຊື້) ຕ້ອງໄດ້ຕິດຕາມກວດກາທຸກໆຂັ້ນຕອນໂດຍເລີ່ມແຕ່ການກະກຽມເອກະສານປະມູນ ຈົນຮອດການເຊັນສັນຍາ ແລະການຈັດຕັ້ງປະຕິບັດສັນຍາ.

ມາດຕາ 39: ມາດຕະການຕໍ່ຜູ້ລະເມີດ:

- ບຸກຄົນ, ນິຕິບຸກຄົນ ຫລືການຈັດຕັ້ງໃດ ຫາກລະເມີດ ຫລືປະຕິບັດບໍ່ຖືກຕາມຂໍ້ກຳນົດຂອງດຳລັດສະບັບນີ້ ຈະຖືກລົງໂທດດ້ວຍວິທີການສຶກສາອົບຮົມ, ຕັກເຕືອນ, ປະຕິບັດວິໄນຕາມລະບຽບລັດຖະກອນ, ປັບໃໝ ຫລືລົງໂທດຕາມກົດໝາຍຕາມສະຖານໜັກ ຫລືເບົາຂອງພຶດຕິກຳ.
- ການລະເມີດດຳລັດສະບັບນີ້ຫາກເປັນການກະທຳຜິດທາງອາຍາເຊັ່ນ: ການປອມແປງເອກະສານ, ໃຊ້ອານາດເກີນຂອບເຂດການເລັ່ນເລີ້ ໃນການປະຕິບັດໜ້າທີ່ຈະຖືກດຳເນີນຄະດີ ຕາມກົດໝາຍອາຍາ.
- ໃນກໍລະນີ ມີການສົມຮູ້ຮ່ວມຄິດກັບບໍລິສັດ ຫລືບຸກຄົນ ເພື່ອອອກແບບຄິດໄລ່ມູນຄ່າກໍ່ສ້າງບໍ່ຖືກກັບຕົວຈິງ ຫລືສ້າງເງື່ອນໄຂໃຫ້ຊະນະການປະມູນ ເພື່ອຜົນປະໂຫຍດຮ່ວມກັນ ຫລືຜົນປະໂຫຍດສ່ວນຕົວ, ຊຶ່ງສ້າງຄວາມເສັຍຫາຍໃຫ້ແກ່ຊັບສົມບັດຂອງລັດ ຫລືລວມໝູ່ ຈະຖືກດຳເນີນຄະດີ ແລະລົງໂທດຕາມກົດໝາຍ.
- ສັນຍາການຈັດຊື້, ການກໍ່ສ້າງ - ສ້ອມແປງ ແລະສັນຍາການບໍລິການ, ຫາກບໍ່ໄດ້ນຳໃຊ້ຮູບການປະມູນໃດໜຶ່ງ ທີ່ໄດ້ກຳນົດໄວ້ໃນໝວດທີ 2 ຂອງດຳລັດສະບັບນີ້ ແລະທຸກໆ ການປະມູນທີ່ບໍ່ໂປ່ງໃສ ແມ່ນຖືເປັນໂມຄະ.
- ຕໍ່ຜູ້ເຂົ້າແຂ່ງຂັນປະມູນໃດໜຶ່ງ ທີ່ມີພຶດຕິກຳຊື້ຈ້າງ ຫລືຮັບວ່າຈະໃຫ້ ວັດຖຸສິ່ງຂອງ ຫລືເງິນຄຳ ດ້ວຍທາງກົງ ຫລືທາງອ້ອມໃຫ້ແກ່ກຳມະການປະມູນ ຫລືບຸກຄົນທີ່ມີສ່ວນຕັດສິນ ເພື່ອຊະນະການປະມູນແບບບໍ່ໂປ່ງໃສ, ຊຶ່ງເຮັດໃຫ້ຜິດຕໍ່ລະບຽບຂັ້ນຕອນການປະມູນ, ຄະນະກຳມະການປະມູນ ຫລືຜູ້ຈັດຊື້ ຫລືເຈົ້າຂອງໂຄງການສາມາດຕັດອອກຈາກການປະມູນນັ້ນເລີຍ. ພ້ອມທັງບັນທຶກ ແລະແຈ້ງໃຫ້ຜູ້ເຂົ້າແຂ່ງຂັນປະມູນທັງຫມົດຊາບ ຫລືດຳເນີນຄະດີຕາມກົດຫມາຍ.

ມາດຕາ 40: ການຕໍ່ວ່າ

ຜູ້ເຂົ້າແຂ່ງຂັນປະມູນ ຫາກຮູ້ເຫັນການກະທຳຜິດ ຂອງຄະນະກຳມະການປະມູນ ຫລືຜູ້ຈັດຊື້ ຫລືເຈົ້າຂອງໂຄງການ ທີ່ຕິດພັນກັບການຈັດຊື້ໃດໜຶ່ງນັ້ນ, ສາມາດຕໍ່ວ່າເປັນລາຍລັກອັກສອນຫາ ປະທານຄະນະກຳມະການປະມູນ, ພ້ອມຫຼັກຖານກ່ຽວກັບການກະທຳດັ່ງກ່າວ. ຄຳຕໍ່ວ່ານີ້ຕ້ອງໄດ້ພິຈາລະນາ ແລະແກ້ໄຂໂດຍສອດຄ່ອງກັບລະບຽບການຈັດຕັ້ງປະຕິບັດດຳລັດສະບັບນີ້.

## ໝວດທີ 6
## ບົດບັນຍັດສຸດທ້າຍ

ມາດຕາ 41: ການຈັດຕັ້ງປະຕິບັດ

ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດດຳລັດສະບັບນີ້ ໄດ້ຢ່າງຖືກຕ້ອງ ແລະມີປະສິດທິຜົນ. ມອບໃຫ້ກະຊວງການເງິນຜັນຂະຫຍາຍ ແລະອອກຂໍ້ກຳນົດ, ລະບຽບການ, ຄຳແນະນຳ ແລະມາດຕະການລະອຽດໃຫ້ສອດຄ່ອງ ແລະເໝາະສົມແຕ່ລະໄລຍະ ແລະມີໜ້າທີ່ຕິດຕາມ, ກວດກາການຈັດຕັ້ງປະຕິບັດຕົວຈິງຕາມ ພາລະບົດບາດຂອງຕົນ.

ບັນດາອົງການຈັດຕັ້ງຂອງລັດຕ້ອງໄດ້ຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະບັນດາລະບຽບການ, ຂໍ້ກຳນົດທີ່ກ່ຽວຂ້ອງໃຫ້ຖືກຕ້ອງ, ເຂັ້ມງວດ ແລະໃຫ້ໄດ້ຮັບຜົນດີ.

ມາດຕາ 42: ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະປ່ຽນແທນດຳລັດວ່າດ້ວຍການຈັດຊື້ສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະການບໍລິການດ້ວຍທຶນຂອງລັດ, ເລກທີ 95/ນຍ, ລົງວັນທີ 5/12/1995.

ນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ

ບຸນຍັງ ວໍລະຈິດ